ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ສະພາປະຊາຊົນແຂວງຈຳປາສັກ

ເລກທີ 13 /ສພຂ.ຈສ

ແຂວງຈຳປາສັກ, ວັນທີ 15 ກຸມພາ 2023

# ມະຕິ

## ຂອງປະຊຸມສະພາປະຊາຊົນແຂວງຈຳປາສັກ ກ່ຽວກັບການຮັບຮອງເອົາຂໍ້ຕົກລົງວ່າດ້ວຍການຄຸ້ມຄອງ ແລະ ພັດທະນາພື້ນທີ່ສີຂຽວ ໃນນະຄອນປາກເຊ

- ອີງຕາມ ມາດຕາ 77 ຂໍ້ 2 ຂອງລັດຖະທຳມະນູນ ສະບັບປັບປຸງປີ 2015 ແລະ ມາດຕາ 59 ຂໍ້ 6 ຂອງກົດໝາຍວ່າດ້ວຍການປັບປຸງບາງມາດຕາ ຂອງກົດໝາຍວ່າດ້ວຍສະພາແຫ່ງຊາດ ແລະ ສະພາປະຊາຊົນຂັ້ນແຂວງ ສະບັບເລກທີ 82/ສພຊ, ລົງວັນທີ 30 ມິຖຸນາ 2020;
- ອີງຕາມ ໜັງສືສະເໜີຂອງອົງການປົກຄອງແຂວງຈຳປາສັກ ສະບັບເລກທີ 02/ອປຄຂ.ຈສ, ລົງວັນທີ 13 ກັນຍາ 2022.

ພາຍຫຼັງທີ່ກອງປະຊຸມສະໄໝສາມັນເທື່ອທີ 4 ຂອງສະພາປະຊາຊົນແຂວງຈຳປາສັກ ຊຸດທີ II ໄດ້ຄົ້ນຄວ້າ ພິຈາລະນາຢ່າງກວ້າງຂວາງ ແລະ ເລິກເຊິ່ງ ກ່ຽວກັບເນື້ອໃນ ຂອງຂໍ້ຕົກລົງວ່າດ້ວຍການຄຸ້ມຄອງ ແລະ ພັດທະນາພື້ນທີ່ສີຂຽວ ໃນນະຄອນປາກເຊ ໃນວາລະຕອນເຊົ້າຂອງກອງປະຊຸມ ຄັ້ງວັນທີ 01 ກຸມພາ 2023.

**ກອງປະຊຸມສະພາປະຊາຊົນແຂວງຈຳປາສັກ ຕົກລົງ:**

**ມາດຕາ 1** ຮັບຮອງເອົາຂໍ້ຕົກລົງວ່າດ້ວຍການຄຸ້ມຄອງ ແລະ ພັດທະນາພື້ນທີ່ສີຂຽວ ໃນນະຄອນປາກເຊ ດ້ວຍຄະແນນສຽງເຫັນດີຫຼາຍກວ່າເຄິ່ງໜຶ່ງ ຂອງຈຳນວນສະມາຊິກສະພາປະຊາຊົນແຂວງ ທີ່ເຂົ້າຮ່ວມກອງປະຊຸມ.

**ມາດຕາ 2** ມອບໃຫ້ອົງການປົກຄອງແຂວງ, ອົງການປົກຄອງນະຄອນປາກເຊ ແລະ ພາກສ່ວນກ່ຽວຂ້ອງ ຈັດຕັ້ງຜັນຂະຫຍາຍມະຕິສະບັບນີ້ ຢ່າງເຂັ້ມງວດ.

**ມາດຕາ 3** ມອບໃຫ້ຄະນະປະຈຳສະພາປະຊາຊົນແຂວງ, ຄະນະກຳມະການທີ່ກ່ຽວຂ້ອງ ຂອງສະພາປະຊາຊົນແຂວງ, ສະມາຊິກສະພາປະຊາຊົນແຂວງ ຕິດຕາມກວດກາ ການຈັດຕັ້ງປະຕິບັດມະຕິສະບັບນີ້ ຕາມພາລະບົດບາດ ຂອບເຂດສິດ ແລະ ໜ້າທີ່ຂອງຕົນ.

**ມາດຕາ 4** ມະຕິສະບັບນີ້ ມີຜົນສັກສິດ ນັບແຕ່ວັນລົງລາຍເຊັນເປັນຕົ້ນໄປ.

**ປະທານສະພາປະຊາຊົນແຂວງຈຳປາສັກ**

**ສາຍທອງ ໄຊຍະວົງ**

ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ແຂວງຈຳປາສັກ

ເລກທີ 351 /ຈຂ.ຈສ

ແຂວງຈຳປາສັກ, ວັນທີ 22/3/2023.

# ຂໍ້ຕົກລົງ

## ວ່າດ້ວຍການຄຸ້ມຄອງ ແລະ ພັດທະນາພື້ນທີ່ສີຂຽວ ໃນນະຄອນປາກເຊ

- ອີງຕາມ ກົດໝາຍວ່າດ້ວຍການປົກຄອງທ້ອງຖິ່ນ ສະບັບປັບປຸງເລກທີ 68/ສພຊ, ລົງວັນທີ 14 ທັນວາ 2015;
- ອີງຕາມ ກົດໝາຍວ່າດ້ວຍການສ້າງນິຕິກຳ ສະບັບປັບປຸງເລກທີ 06/ສພຊ, ລົງວັນທີ 16 ພະຈິກ 2021;
- ອີງຕາມ ກົດໝາຍວ່າດ້ວຍການປົກປັກຮັກສາສິ່ງແວດລ້ອມ ສະບັບປັບປຸງເລກທີ 29/ສພຊ, ລົງວັນທີ 18 ທັນວາ 2012;
- ອີງຕາມ ໜັງສືສະເໜີ ຂອງເຈົ້ານະຄອນປາກເຊ ສະບັບເລກທີ 108/ຈນຄ.ປຊ, ລົງວັນທີ 11 ສິງຫາ 2022;
- ອີງຕາມ ໜັງສືສະເໜີ ຂອງຄະນະປະຈຳສະພາປະຊາຊົນແຂວງຈຳສັກ ສະບັບເລກທີ 21/ຄປຈ.ສພຂ, ລົງວັນທີ 15 ກຸມພາ 2023.

## ເຈົ້າແຂວງຈຳປາສັກ ຕົກລົງ:

## ໝວດທີ 1

## ບົດບັນຍັດທົ່ວໄປ

### ມາດຕາ 1 ຈຸດປະສົງ

ຂໍ້ຕົກລົງສະບັບນີ້ ກຳນົດນະໂຍບາຍ, ຫຼັກການ, ເປົ້າໝາຍ, ເງື່ອນໄຂ ແລະ ມາດຕະການ ກ່ຽວກັບການຄຸ້ມຄອງ ແລະ ພັດທະນາພື້ນທີ່ສີຂຽວ ໃນນະຄອນປາກເຊ, ບັນດາເມືອງ ແລະ ບ້ານທີ່ມີຊາຍແດນຕິດຈອດ ເພື່ອເຮັດໃຫ້ພື້ນທີ່ດັ່ງກ່າວ ໄດ້ຮັບການພັດທະນາ, ປົກປັກຮັກສາ, ບູລະນະ, ຟື້ນຟູ, ປູກຕົ້ນໄມ້-ພືດສີຂຽວຄືນໃໝ່ ໃຫ້ເປັນພື້ນທີ່ສີຂຽວ ສະອາດງາມຕາ ແນໃສ່ສ້າງນະຄອນປາກເຊ ໃຫ້ມີອາກາດສົດຊື່ນ, ຮົ່ມເຢັນ, ມີພູມີທັດ ແລະ ທັດສະນີຍະພາບທີ່ສວຍງາມ, ໜ້າຢູ່, ປະກອບສ່ວນເຂົ້າໃນການພັດທະນາເສດຖະກິດ-ສັງຄົມ ຂອງນະຄອນປາກເຊ ໃຫ້ໄປຕາມທິດສີຂຽວ ແລະ ຍືນຍົງ.

### ມາດຕາ 2 ການຄຸ້ມຄອງ ແລະ ພັດທະນາພື້ນທີ່ສີຂຽວ

ການຄຸ້ມຄອງ ແລະ ພັດທະນາພື້ນທີ່ສີຂຽວ ແມ່ນຂະບວນການບໍລິຫານປັບປຸງ, ບູລະນະ, ຟື້ນຟູ, ປູກຕົ້ນໄມ້-ພືດສີຂຽວຄືນໃໝ່ ໃສ່ບ່ອນພື້ນທີ່ ທີ່ເປັນພື້ນທີ່ສີຂຽວເກົ່າ ແລະ ໃໝ່ ຊຶ່ງການປັບປຸງ, ບູລະນະ, ຟື້ນຟູ, ປູກຕົ້ນໄມ້-ພືດສີຂຽວດັ່ງກ່າວ ຕ້ອງຮັບປະກັນທາງດ້ານປະລິມານ ແລະ ຄຸນນະພາບ ຕາມທິດສີຂຽວ ແລະ ຍືນຍົງ.

**ມາດຕາ 3 ການອະທິບາຍຄຳສັບ**

ຄຳສັບທີ່ໃຊ້ໃນຂໍ້ຕົກລົງສະບັບນີ້ ມີຄວາມໝາຍ ດັ່ງນີ້:

1. **ພູມີທັດ** ໝາຍເຖິງ ພູມສັນຖານ ທີ່ເກີດຂຶ້ນເອງ ຕາມທຳມະຊາດ ແລະ ມະນຸດສ້າງຂຶ້ນ;

2. **ທັດສະນີຍະພາບ** ໝາຍເຖິງ ຮູບພາບ ຫຼື ທິວທັດ ທາງທຳມະຊາດ ທີ່ເຕັມໄປດ້ວຍຄວາມສວຍສົດງົດງາມ;

3. **ທິດສີຂຽວ** ໝາຍເຖິງ ການກຳນົດທິດ ເພື່ອພັດທະນານະຄອນປາກເຊ ໃຫ້ເປັນພື້ນທີ່ສີຂຽວ ທີ່ມີສີສັນສວຍງາມ;

4. **ຍືນຍົງ** ໝາຍເຖິງ ການເຮັດໃຫ້ເປັນພື້ນທີ່ສີຂຽວ ໃນນະຄອນປາກເຊ ມີຄວາມຄົງຕົວ ແລະ ຂະຫຍາຍຕົວຕໍ່ເນື່ອງຕະຫຼອດໄປ;

5. **ສຸຂາພິບານ** ໝາຍເຖິງ ການດຳເນີນ ການເກັບມ້ຽນ, ການເຄື່ອນຍ້າຍ, ການກຳຈັດ, ການບຳບັດນ້ຳເປື້ອນຈາກຄົວເຮືອນ, ນ້ຳເສດເຫຼືອຈາກການນຳໃຊ້ຕ່າງໆ ລວມທັງການສ້າງວິດຖ່າຍ, ກຳຈັດສິ່ງເສດເຫຼືອຂອງຄົນ ເພື່ອບໍ່ໃຫ້ໄຫຼໄປສູ່ແຫຼ່ງນ້ຳ ແລະ ລະບົບນ້ຳປະປາ ແນໃສ່ຮັກສາສຸຂະພາບຂອງຄົນ;

6. **ບາງພື້ນທີ່ ຂອງເມືອງທີ່ມີຊາຍແດນຕິດຈອດ** ໝາຍເຖິງ ບັນດາເມືອງທີ່ມີຊາຍແດນຕິດຈອດກັບນະຄອນປາກເຊ ເປັນຕົ້ນ: ເມືອງບາຈຽງຈະເລີນສຸກ, ເມືອງປະທຸມພອນ, ເມືອງຊະນະສົມບູນ ແລະ ເມືອງໂພນທອງ;

7. **ເສັ້ນທາງສີຂຽວ** ໝາຍເຖິງ ລະບົບເສັ້ນທາງ ທີ່ມີການຕົບແຕ່ງດ້ວຍຕົ້ນໄມ້, ປູກຕົ້ນໄມ້ ລຽບຕາມສອງພາກທາງ, ດູກາງທາງ ດ້ວຍຕົ້ນໄມ້ປະດັບ ເພື່ອໃຫ້ຄວາມຮົ່ມເຢັນ ແລະ ສວຍງາມ;

8. **ບ້ານສີຂຽວ** ໝາຍເຖິງ ບ້ານທີ່ມີການປູກຕົ້ນໄມ້, ສ້າງເປັນສວນປູກສ່ວນບຸກຄົນ ແລະ ປູກເປັນສວນລວມຂອງບ້ານ;

9. **ສວນສາທາລະນະສະຖານສີຂຽວ** ໝາຍເຖິງ ສຳນັກງານ, ຫ້ອງການພາກລັດ ແລະ ເອກະຊົນ, ໂຮງຮຽນ, ວັດວາອາຮາມ, ໂຮງໝໍ, ໂຮງແຮມ, ຮ້ານອາຫານ, ສະຖານທີ່ຈອດລົດ ທີ່ມີສຳປະສິດນຳໃຊ້ທີ່ດິນ ເພື່ອສີຂຽວ ດ້ວຍການປູກຕົ້ນໄມ້ໃຫ້ຮົ່ມ, ຕົ້ນໄມ້ໃຫ້ໝາກ, ຕົ້ນໄມ້ປະດັບ, ສວນດອກໄມ້, ເດີ່ນຫຍ້າ ແລະ ໂຖຕົ້ນໄມ້ປະດັບ, ຕົບແຕ່ງທີ່ຂຽວສະອາດງາມຕາ;

10. **ທີ່ຢູ່ອາໄສ** ໝາຍເຖິງ ເຮືອນທີ່ຢູ່ອາໄສຂອງຄອບຄົວ, ຫໍພັກ, ອາພາດເມັ້ນ ແລະ ບ້ານຈັດສັນ ທີ່ມີສຳປະສິດນຳໃຊ້ພື້ນທີ່ສີຂຽວ ຕົບແຕ່ງໃຫ້ສະອາດງາມຕາ;

11. **ໂຮງຈັກ, ໂຮງງານສີຂຽວ** ໝາຍເຖິງ ໂຮງງານທີ່ໄດ້ປະຕິບັດຕາມລະບຽບ, ມີເຂດພັດທະນາ ທີ່ມີເນື້ອທີ່ສີຂຽວຢ່າງເປັນລະບົບ;

12. **ສຳປະສິດ** ໝາຍເຖິງ ການນຳໃຊ້ພື້ນທີ່ສີຂຽວ ທີ່ປູກຕົ້ນໄມ້ໃຫ້ຮົ່ມ, ຕົ້ນໄມ້ໃຫ້ໝາກ, ຕົ້ນໄມ້ປະດັບ, ສວນດອກໄມ້, ເດີ່ນຫຍ້າ ແລະ ໂຖຕົ້ນໄມ້ປະດັບ ຕາມສຳນັກງານ, ຫ້ອງການ, ໂຮງຮຽນ, ເຮືອນພັກ, ວັດວາອາຮາມ ແລະ ສະຖານທີ່ຕົບແຕ່ງຕ່າງໆ ໃຫ້ເປັນອັດຕາສ່ວນສີຂຽວ;

13. **ມົນລະພິດ** ໝາຍເຖິງ ສານເຄມີ, ກຳມັນຕະພາບລັງສີ, ຝຸ່ນລະອອງ, ຄວັນ ລວມທັງ ສຽງ, ແສງ, ກິ່ນ, ຄວາມສັ່ນສະເທືອນ ແລະ ຄວາມຮ້ອນທີ່ເຈືອປົນໃນອາກາດ, ດິນ, ນ້ຳ ທີ່ມີຄ່າຄວາມເຂັ້ມຂຸ້ນ ເກີນມາດຕະຖານຄຸນນະພາບສິ່ງແວດລ້ອມ ຫຼື ມາດຕະຖານຄວບຄຸມມົນລະພິດແຫ່ງຊາດ ຊຶ່ງເກີດຂຶ້ນຈາກການກະທຳຂອງມະນຸດ ຫຼື ຕາມທຳມະຊາດ ທີ່ມີຜົນກະທົບຕໍ່ຊີວິດ, ສຸຂະພາບຂອງຄົນ, ສັດ, ພືດ, ສິ່ງມີຊີວິດອື່ນ ແລະ ລະບົບນິເວດ;

14. **ເຂດແດນຕິດຈອດ** ໝາຍເຖິງ ພື້ນທີ່ຂອງບ້ານທີ່ຂຶ້ນກັບບັນດາເມືອງຕິດຈອດ ກັບນະຄອນປາກເຊ ຕາມການແບ່ງເຂດການປົກຄອງ;

15. **ຖະໜົນໃຫຍ່ທ້າວາວ** ໝາຍເຖິງ ບັນດາຖະໜົນເຂົ້າ-ອອກ ຜ່ານເທດສະບານນະຄອນປາກເຊ ໂດຍມີທ້າຖະໜົນ ຊຶ່ງປະກອບດ້ວຍ: ຖະໜົນພູມີພາກ, ຖະໜົນຫຼວງແຫ່ງຊາດ, ຖະໜົນຫຼວງແຂວງ ແລະ ຖະໜົນຫຼວງຂອງນະຄອນ;

16. **ຂຽວ** ໝາຍເຖິງ ການເພີ່ມພື້ນທີ່ສີຂຽວ ເຂດທີ່ມີຕົ້ນໄມ້ໃຫ້ຄວາມຮົ່ມເຢັນ ແລະ ອາກາດສົດຊື່ນ ມີຄວາມອຸດົມສົມບູນ ຂອງພືດພັນຕ່າງໆ ເຊັ່ນ: ສວນສາທາລະນະ, ສວນຄົວ, ສວນດອກໄມ້ປະດັບ, ເດີ່ນຫຍ້າ, ມີຕົ້ນໄມ້ແຄມທາງ, ແຄມນໍ້າ ແລະ ການນໍາໃຊ້ຊັບພະຍາກອນທໍາມະຊາດ ແບບມີປະສິດທິຜົນ;

17. **ສະອາດ** ໝາຍເຖິງ ອາກາດບໍລິສຸດ, ນໍ້າສະອາດ, ດິນ ທີ່ບໍ່ມີສານເຈືອປົນ ແລະ ປາສະຈາກຂີ້ເຫຍື້ອ ລວມທັງຄວາມສະອາດຂອງສະຖານທີ່ ເຊັ່ນ: ທີ່ຢູ່ອາໃສ, ສະຖານບໍລິການ, ຖະໜົນຫົນທາງ;

18. **ງາມຕາ** ໝາຍເຖິງ ການຈັດສັນ ແລະ ຕົບແຕ່ງ ຫຼື ປະດັບປະດາ ໃຫ້ມີຄວາມເປັນລະບຽບຮຽບຮ້ອຍ ແລະ ຈົບງາມ.

### ມາດຕາ 4 ນະໂຍບາຍຂອງອົງການປົກຄອງແຂວງ ກ່ຽວກັບການຄຸ້ມຄອງ ແລະ ພັດທະນາພື້ນທີ່ສີຂຽວ

ອົງການປົກຄອງແຂວງ ສົ່ງເສີມ ແລະ ຊຸກຍູ້ ບຸກຄົນ, ນິຕິບຸກຄົນ ແລະ ອົງການຈັດຕັ້ງຕ່າງໆ ລົງທຶນເຂົ້າໃນກິດຈະການໂຄງລ່າງ ຂອງການປູກຕົ້ນໄມ້ໃຫ້ຮົ່ມ, ຕົ້ນໄມ້ໃຫ້ໝາກ, ຕົ້ນໄມ້ປະດັບ, ສວນສາທາລະນະ, ພູມີທັດສີຂຽວ ດ້ວຍການປະຕິບັດນະໂຍບາຍ ດ້ານແຫຼ່ງທຶນ, ວັດຖຸອຸປະກອນ ແລະ ການສະໜອງເບ້ຍໄມ້ ທີ່ເປັນເອກະລັກ.

### ມາດຕາ 5 ຫຼັກການເຄື່ອນໄຫວ ໃນການຄຸ້ມຄອງ ແລະ ພັດທະນາພື້ນທີ່ສີຂຽວ

ການດໍາເນີນວຽກງານການຄຸ້ມຄອງ ແລະ ພັດທະນາພື້ນທີ່ສີຂຽວ ໃນນະຄອນປາກເຊ ຕ້ອງປະຕິບັດຕາມຫຼັກການຕົ້ນຕໍ ດັ່ງນີ້:

1. ສອດຄ່ອງກັບແນວທາງນະໂຍບາຍ, ລັດຖະທໍາມະນູນ, ກົດໝາຍ, ແຜນພັດທະນາເສດຖະກິດ-ສັງຄົມແຫ່ງຊາດ ກໍຄືແຜນພັດທະນາເສດຖະກິດ-ສັງຄົມຂອງແຂວງ ແລະ ລະບຽບການ ຂອງຂະແໜງການທີ່ກ່ຽວຂ້ອງ;

2. ສອດຄ່ອງກັບມະຕິ ຂອງຄະນະບໍລິຫານງານພັກແຂວງ ວ່າດ້ວຍການພັດທະນານະຄອນປາກເຊ ໃນໄລຍະໃໝ່, ມະຕິ ຂອງອົງການປົກຄອງນະຄອນປາກເຊ ໃຫ້ເປັນເມືອງໜ້າຢູ່ ( 8 ສ ), ວິໄສທັດຮອດປີ 2030, ຍຸດທະສາດພັດທະນາຕົວເມືອງສີຂຽວ;

3. ສອດຄ່ອງຕາມມາດຕະຖານການຄຸ້ມຄອງ ແລະ ພັດທະນາຕົວເມືອງ ຂອງພາກພື້ນ ແລະ ສາກົນ ຕາມທີ່ໄດ້ກໍານົດໄວ້ໃນສົນທິສັນຍາ ແລະ ສັນຍາສາກົນ ດ້ານສິ່ງແວດລ້ອມ ທີ່ ສປປ ລາວ ເປັນພາຄີ ໂດຍສະເພາະ ຄູ່ມືແນະນໍາ ການຈັດຕັ້ງປະຕິບັດວຽກງານ ສີຂຽວ ສະອາດງາມຕາ;

4. ຮັບປະກັນໃຫ້ນະຄອນປາກເຊ ມີການພັດທະນາພື້ນທີ່ສີຂຽວ ສະອາດງາມຕາ ທາງດ້ານປະລິມານ ແລະ ຄຸນນະພາບ ຕາມທິດສີຂຽວ ແລະ ຍືນຍົງ.

### ມາດຕາ 6 ຂອບເຂດການນໍາໃຊ້

ຂໍ້ຕົກລົງສະບັບນີ້ ນໍາໃຊ້ສໍາລັບ ບຸກຄົນ, ນິຕິບຸກຄົນ ແລະ ອົງການຈັດຕັ້ງ ທັງພາຍໃນ ແລະ ຕ່າງປະເທດ ທີ່ດໍາລົງຊີວິດຢູ່ພາຍໃນນະຄອນປາກເຊ ແລະ ບາງພື້ນທີ່ ຂອງເມືອງ, ບ້ານ ທີ່ມີເຂດແດນຕິດຈອດກັບນະຄອນປາກເຊ.

## ໝວດທີ 2
## ເປົ້າໝາຍ ໃນການຄຸ້ມຄອງ ແລະ ພັດທະນາພື້ນທີ່ສີຂຽວ

### ມາດຕາ 7 ເປົ້າໝາຍ ໃນການຄຸ້ມຄອງ ແລະ ພັດທະນາພື້ນທີ່ສີຂຽວ

ເປົ້າໝາຍ ໃນການຄຸ້ມຄອງ ແລະ ພັດທະນາພື້ນທີ່ສີຂຽວ ທີ່ໄດ້ກໍານົດໃນເຂດນໍາໃຊ້ທີ່ດິນ ຂອງຜັງເມືອງປາກເຊ ມີດັ່ງນີ້:

7.1 ເຂດໃຈກາງຕົວເມືອງ ເນື້ອທີ່ 281 ເຮັກຕາ ປະກອບມີ: ບໍລິເວນ 10 ບ້ານເທດສະບານ ຄື: ບ້ານທ່າຫຼວງ, ບ້ານພະບາດ, ບ້ານໂພນໄຊ, ບ້ານຫຼັກເມືອງ, ບ້ານປາກເຊ, ບ້ານທົ່ງ, ບ້ານຮ່ອງຂະຍອມ, ບ້ານສາງນ້ຳມັນ, ບ້ານໂພນກຸງ ແລະ ບ້ານໂພນສະຫວັນ ຕາມເສັ້ນທາງສາຍເອກ, ສາຍຫຼັກ, ສວນສາທາລະນະ, ສະຖານທີ່ຫ້ອງການ, ກິດຈະການສາທາລະນະ ຂອງລັດ ແລະ ຂອງເອກະຊົນ ບາງບ່ອນ ຢູ່ໃນ 10 ບ້ານ;

7.2 ເຂດອ້ອມໃຈກາງຕົວເມືອງ ເນື້ອທີ່ 1.938 ເຮັກຕາ ປະກອບມີ: ບໍລິເວນສ່ວນໜຶ່ງຂອງ 10 ບ້ານເທດສະບານ ຕາມທີ່ໄດ້ກຳນົດໄວ້ໃນຂໍ້ 7.1 ແລະ 6 ບ້ານໃຫຍ່ ຄື: ບ້ານສະພານໄຊ, ບ້ານທ່າໄຮ, ບ້ານສະໜາມໄຊ, ບ້ານໂຊກອຳນວຍ, ບ້ານຫ້ວຍຍາງຄຳ ແລະ ບ້ານໂບນສະຫວ່າງ ຕາມເສັ້ນທາງສາຍຫຼັກ, ສາຍເຊື່ອມ, ສວນສາທາລະນະ, ສະຖານທີ່ຫ້ອງການ, ກິດຈະການສາທາລະນະຂອງລັດ ແລະ ຂອງເອກະຊົນ, ພື້ນທີ່ທຳມະຊາດ, ຮ່ອງນ້ຳ, ປ່າ ແລະ ພື້ນທີ່ການຜະລິດ ຢູ່ໃນ 6 ບ້ານໃຫຍ່;

7.3 ເຂດຊານເມືອງ (ເຂດອ້ອມຕົວເມືອງ) ເນື້ອທີ່ 1.575,2 ເຮັກຕາ ປະກອບມີ: ບໍລິເວນສ່ວນໜຶ່ງຂອງ 6 ບ້ານໃຫຍ່ ແລະ ບັນດາກຸ່ມບ້ານ ທີ່ນອນໃນເຂດອ້ອມຕົວເມືອງ ຫຼື ຊານເມືອງ ຕາມເສັ້ນທາງຫຼາຍປະເພດ ເຊັ່ນ: ທາງຫຼວງແຫ່ງຊາດ, ທາງຫຼວງແຂວງຜ່ານ, ກິດຈະການຂອງຂະແໜງການ, ສະຖາບັນ, ມະຫາວິທະຍາໄລ, ສວນສາທາລະນະ, ສະຖານທີ່ຫ້ອງການ, ຄ້າຍພູມ, ກິດຈະການສາທາລະນະ ຂອງລັດ ແລະ ຂອງເອກະຊົນ, ພື້ນທີ່ທຳມະຊາດ, ຮ່ອງນ້ຳ, ປ່າ ແລະ ພື້ນທີ່ການຜະລິດ;

7.4 ເຂດຂະຫຍາຍຕົວເມືອງ ເນື້ອທີ່ 1.157 ເຮັກຕາ ປະກອບມີ: ບໍລິເວນບັນດາກຸ່ມບ້ານ ທີ່ເປັນເຂດຊານເມືອງ ຫຼື ເຂດທີ່ມີແຜນຂະຫຍາຍຕົວເມືອງ ຕາມບາງເສັ້ນທາງຫຼາຍປະເພດຜ່ານໄປເຖິງ, ທາງເຊື່ອມ, ທາງຊອຍໃນເຂດພື້ນທີ່ຊົນນະບົດ, ສະຖານທີ່ຄ້າຍພູມ, ກິດຈະການຂອງອົງການ, ສະຖາບັນ, ຂະແໜງການ, ຮ່ອງນ້ຳ, ສາຍຫ້ວຍ, ປ່າສະຫງວນ, ເຂດນ້ຳໃຫຍ່ ແລະ ພູສູງ;

7.5 ເຂດເຊື່ອມຕໍ່ບັນດາເມືອງຕິດແປະ ປະກອບມີ: ບໍລິເວນສ່ວນໜຶ່ງຂອງບັນດາກຸ່ມບ້ານ ແລະ ບ້ານຂອງບັນດາເມືອງຕິດຈອດ ທີ່ນອນໃນເຂດຊານເມືອງ ຂອງຕົວເມືອງນັ້ນກອມເຖິງ ເຊັ່ນ: ບ້ານໃນກຸ່ມ 3, ກຸ່ມ 5 ຂອງເມືອງບາຈຽງຈະເລີນສຸກ, ບ້ານ ແລະ ກຸ່ມບ້ານຕິດຈອດ ຂອງເມືອງປະທຸມພອນ; ບ້ານ ແລະ ກຸ່ມບ້ານຕິດຈອດ ຂອງເມືອງຊະນະສົມບູນ ແລະ ບັນດາບ້ານໃນເຂດໃຈກາງຕົວເມືອງໂພນທອງ ທີ່ເປັນເຂດຂະຫຍາຍເປັນນະຄອນໃຫຍ່ໃນອານາຄົດ ຕາມເສັ້ນທາງຫຼາຍປະເພດ ເຊັ່ນ: ທາງຫຼວງແຫ່ງຊາດ, ທາງຫຼວງແຂວງຜ່ານ, ກິດຈະການຂອງຂະແໜງການ, ສະຖາບັນ, ມະຫາວິທະຍາໄລ, ສວນສາທາລະນະ, ສະຖານທີ່ຄ້າຍພູມ, ກິດຈະການສາທາລະນະຂອງລັດ ແລະ ເອກະຊົນ, ສະຖານທີ່ທ່ອງທ່ຽວອັດທະນະທຳ, ທຳມະຊາດ, ຮ່ອງນ້ຳ, ປ່າ, ນ້ຳເຊໂດນ, ນ້ຳຂອງ ແລະ ພື້ນທີ່ການຜະລິດ;

7.6 ເຂດແລວຖະໜົນໃຫຍ່ຫ້າດາວ ຕາມເຂດເສັ້ນທາງສາຍເອກ, ທາງພູມິພາກ, ທາງສາຍຫຼັກ ທີ່ຜ່ານຕົວເມືອງປາກເຊ ອອກໄປ ແລະ ເຂົ້າມາ ຕາມ 5 ທິດທາງ ດັ່ງນີ້:

7.6.1 ຖະໜົນສາຍເອກ (ທາງເບຕົງຫຼັກ 9 ເໜືອ): ທາງເລກທີ 13 ໃຕ້ ຈາກນະຄອນປາກເຊ ເຊື່ອມໃສ່ເຂດເມືອງຊະນະສົມບູນ ໄລຍະ 10 ກິໂລແມັດ ໃນຊ່ວງຊາຍແດນເຊື່ອມຕໍ່ກັນ;

7.6.2 ຖະໜົນສາຍເອກ (ທາງເບຕົງຫຼັກ 9 ໃຕ້): ທາງເລກທີ 13 ໃຕ້ ເຊື່ອມກັບທາງເລກທີ 16 W ທາງໄປປາກຊ່ອງ ໄລຍະ 5 ກິໂລແມັດ ໃນຊ່ວງຊາຍແດນເຊື່ອມຕໍ່ກັນ;

7.6.3 ຖະໜົນສາຍຫຼັກ: ທາງສາລາຂຽວ ຮອດສີ່ແຍກໄຟແດງ ຫຼັກ 9 ໃຕ້ ເຊື່ອມໃສ່ທາງເລກທີ 13 ໃຕ້ ທາງໄປເມືອງໂຂງ 10 ກິໂລແມັດ ໃນຊ່ວງຊາຍແດນເຊື່ອມຕໍ່ກັນ;

7.6.4 ຖະໜົນສາຍຫຼັກ: ຜ່ານຂົວນ້ຳຂອງ ທາງເລກທີ 16 W ເຊື່ອມໃສ່ເມືອງໂພນທອງ ໄລຍະ 5 ກິໂລແມັດ ໃນຊ່ວງຊາຍແດນເຊື່ອມຕໍ່ກັນ;

7.6.5 ຖະໜົນສາຍເຊື່ອມ: ເສັ້ນທາງ 14 A ບ້ານຫ້ວຍເພັກ ຫາ ບ້ານພະພິນ ເມືອງໂພນທອງ ແຕ່ 3 ແຍກບ້ານຫ້ວຍເພັກ ອອກໄປເມືອງຈຳປາສັກ ໄລຍະທາງ 5 ກິໂລແມັດ.

**ມາດຕາ 8 ແຜນງານ ໃນການພັດທະນາພື້ນທີ່ສີຂຽວ**

ບຸກຄົນ, ນິຕິບຸກຄົນ ແລະ ອົງການຈັດຕັ້ງ ທີ່ດໍາລົງຊີວິດ ຢູ່ພາຍໃນນະຄອນປາກເຊ ແລະ ບາງພື້ນທີ່ຂອງເມືອງ ທີ່ມີເຂດແດນຕິດຈອດ ຕ້ອງເປັນເຈົ້າການ ແລະ ຮັບຜິດຊອບ ໃນການຜັນຂະຫຍາຍ ໃຫ້ສອດຄ່ອງຕາມ 6 ແຜນງານ ທີ່ໄດ້ກໍານົດໄວ້ໃນແຜນປະຕິບັດຍຸດທະສາດພັດທະນາຕົວເມືອງສີຂຽວ ຄື: ການຄຸ້ມຄອງຂີ້ເຫຍື້ອ, ການຄຸ້ມຄອງນໍ້າເປື້ອນ ແລະ ສຸຂາພິບານ, ການຂົນສົ່ງແບບຍືນຍົງ, ການສ້າງຄວາມທົນທານຕໍ່ການປ່ຽນແປງ ຂອງທໍາມະຊາດ, ການສ້າງພື້ນທີ່ສີຂຽວຕົວເມືອງ ແລະ ການສ້າງພະລັງງານແບບຍືນຍົງ.

## ໝວດທີ 3
## ເງື່ອນໄຂ, ຕົວຊີ້ວັດ ຂອງຄວາມເປັນສີຂຽວ ແລະ ການສ້າງແຜນພັດທະນາພື້ນທີ່ສີຂຽວ

**ມາດຕາ 9 ເງື່ອນໄຂ ແລະ ຕົວຊີ້ວັດ ຂອງຄວາມເປັນສີຂຽວ**

ເງື່ອນໄຂ ແລະ ຕົວຊີ້ວັດ ຂອງຄວາມເປັນສີຂຽວ ສະອາດງາມຕາ ໃນນະຄອນປາກເຊ ແລະ ບາງພື້ນທີ່ ຂອງເມືອງທີ່ມີຊາຍແດນຕິດຈອດ ມີດັ່ງນີ້:

**9.1 ເງື່ອນໄຂ ຂອງຄວາມເປັນສີຂຽວ**

9.1.1 ພື້ນທີ່ຄວາມເປັນສີຂຽວໃຫ້ຮົ່ມເຢັນ ຕາມແລວເສັ້ນທາງສາຍເອກ ກວມເອົາ 20% (ຊາວສ່ວນຮ້ອຍ) ຕໍ່ໜຶ່ງກິໂລແມັດ;

9.1.2 ພື້ນທີ່ຄວາມເປັນສີຂຽວໃຫ້ຮົ່ມເຢັນ ຕາມແລວເສັ້ນທາງສາຍຫຼັກກວມເອົາ 25% (ຊາວຫ້າສ່ວນຮ້ອຍ) ຕໍ່ໜຶ່ງກິໂລແມັດ;

9.1.3 ພື້ນທີ່ຄວາມເປັນສີຂຽວໃຫ້ຮົ່ມເຢັນ ຕາມແລວເສັ້ນທາງສາຍເຊື່ອມ ກວມເອົາ 15% (ສິບຫ້າສ່ວນຮ້ອຍ) ຕໍ່ໜຶ່ງກິໂລແມັດ;

9.1.4 ພື້ນທີ່ຄວາມເປັນສີຂຽວໃຫ້ຮົ່ມເຢັນ ຕາມແລວເສັ້ນທາງສາຍແຈກ ກວມເອົາ 10% (ສິບສ່ວນຮ້ອຍ) ຕໍ່ໜຶ່ງກິໂລແມັດ;

9.1.5 ຄວາມຂຽວປະເພດພຸ່ມໄມ້ ແລະ ເຄືອໄມ້ ກວມເອົາ 5% (ຫ້າສ່ວນຮ້ອຍ) ຂອງພື້ນທີ່ປູກປະດັບຕາມແລວເສັ້ນທາງ ແລະ 30% (ສາມສິບສ່ວນຮ້ອຍ) ຂອງເນື້ອທີ່ຫຍ້າຂຽວ ໃນສວນສາທາລະນະ ແລະ ສະຖານທີ່ອື່ນໆ;

9.1.6 ຄວາມຂຽວປະເພດດອກໄມ້ປະດັບ ແລະ ຫຍ້າຂຽວ ມີເນື້ອທີ່ດອກໄມ້ປະດັບ, ຫຍ້າຂຽວ, ສວນສາທາລະນະ 1 ຕະລາງແມັດ ຕໍ່ 5 ຄົນ.

**9.2. ຕົວຊີ້ວັດ ຂອງຄວາມເປັນສີຂຽວ ໄດ້ກໍານົດໄວ້ໃນຕາຕະລາງ ດັ່ງນີ້:**

| ມາດຕະຖານ | ຕົວຊີ້ວັດ | ການປະເມີນ/ຕົວກໍານົດ |
|---|---|---|
| ສໍາລັບຄົວເຮືອນ | 1. ມີຕົ້ນໄມ້ (ໃຫ້ຮົ່ມ, ໃຫ້ໝາກ ແລະ ປະດັບ) | ກວມ 10% ຂຶ້ນໄປຂອງພື້ນທີ່ |
| | 2. ມີສວນດອກໄມ້ 1 ແຫ່ງຂຶ້ນໄປ, ເຕົ່າດອກໄມ້, ສວນຄົວ, ມີເດີ່ນຫຍ້າ | ຈັດສັນເປັນລະບຽບຮຽບຮ້ອຍ |
| ສໍາລັບບ້ານ | 1. ມີຕົ້ນໄມ້ (ໃຫ້ຮົ່ມ, ໃຫ້ໝາກ ແລະ ປະດັບ) ລຽບຕາມຖະໜົນຫົນທາງສາຍຫຼັກ ແລະ ທາງຮ່ອມ | ກວມ 20% ຂຶ້ນໄປ ຂອງພື້ນທີ່ |
| | 2. ມີສວນດອກໄມ້, ໂຖດອກໄມ້ ແລະ ເດີ່ນຫຍ້າ | ກວມ 80% ຂຶ້ນໄປ ຂອງຈໍານວນຄົວເຮືອນພາຍໃນບ້ານ |



ສ.໒

| | | |
|---|---|---|
| ສໍາລັບໂຮງຮຽນ | 1. ມີຕົ້ນໄມ້ (ໃຫ້ຮົ່ມ, ໃຫ້ໝາກ ແລະ ປະດັບ) | ກວມ 20% ຂຶ້ນໄປຂອງພື້ນທີ່ |
| | 2. ມີສວນດອກໄມ້ 1 ແຫ່ງຂຶ້ນໄປ, ໂຖດອກໄມ້ ຫຼື ເຄົ້າດອກໄມ້ ຫຼື ເດີ່ນກິລາ ແລະ ສວນຄົວໂຮງຮຽນ | ຈັດສັນເປັນລະບຽບຮຽບຮ້ອຍ |
| ສໍາລັບຫ້ອງການ, ສໍານັກງານພາກລັດ ແລະ ເອກະຊົນ | 1. ມີຕົ້ນໄມ້ (ໃຫ້ຮົ່ມ, ໃຫ້ໝາກ ແລະ ປະດັບ) | ກວມ 10% ຂຶ້ນໄປຂອງພື້ນທີ່ |
| | 2. ມີສວນດອກໄມ້ 1 ແຫ່ງຂຶ້ນໄປ, ໂຖດອກໄມ້ ຫຼື ເຄົ້າດອກໄມ້ ແລະ ເດີ່ນຫຍ້າ | ຈັດສັນເປັນລະບຽບຮຽບຮ້ອຍ |
| ສໍາລັບຕົວເມືອງ | 1. ມີຕົ້ນໄມ້ (ໃຫ້ຮົ່ມ, ໃຫ້ໝາກ, ປະດັບ ຫຼື ຕົ້ນໄມ້ດັ້ງເດີມ) ລຽບຕາມຖະໜົນຫົນທາງສາຍຫຼັກ ແລະ ສະຖານທີ່ສາທາລະນະ ພາຍໃນຕົວເມືອງ | ກວມ 20% ຂຶ້ນໄປຂອງພື້ນທີ່ |
| | 2. ມີສວນສາທາລະນະ (ສວນຂະໜາດນ້ອຍ ຫຼື ສວນດອກໄມ້ໃນຕົວເມືອງ) | 1 ແຫ່ງຂຶ້ນໄປ |

**ມາດຕາ 10 ການສ້າງແຜນພັດທະນາພື້ນທີ່ສີຂຽວ**

ບຸກຄົນ, ນິຕິບຸກຄົນ ແລະ ອົງການຈັດຕັ້ງ ທີ່ອາໄສຢູ່ນະຄອນປາກເຊ ແລະ ບັນດາເມືອງ ທີ່ມີຊາຍແດນຕິດຈອດ ໃຫ້ປະສານສົມທົບ ແລະ ປະກອບສ່ວນເຂົ້າໃນການພັດທະນາ ໂດຍມີການສ້າງແຜນພັດທະນາພື້ນທີ່ສີຂຽວ ດັ່ງນີ້:

1. ການສ້າງແຜນປົກປັກຮັກສາ, ບູລະນະ ຕາມການວາງແຜນຜັງເມືອງລວມ, ການວາງແຜນຜັງລະອຽດ, ກິດຈະການພັດທະນາທຸລະກິດ ແລະ ການຜະລິດຕ່າງໆ ຕ້ອງຄໍານຶງເຖິງເງື່ອນໄຂ ແລະ ຕົວຊີ້ວັດ ຂອງຄວາມເປັນສີຂຽວ;

2. ພະແນກການ, ອົງການທຽບເທົ່າພະແນກການ, ອົງການປົກຄອງນະຄອນປາກເຊ ແລະ ບັນດາຫ້ອງການໃນນະຄອນປາກເຊ, ເມືອງ ແລະ ບ້ານຕິດຈອດ ຕ້ອງປະຕິບັດພັນທະ ໃນການຟື້ນຟູ ແລະ ປົກປັກຮັກສາເທດສະບານນະຄອນປາກເຊ ສີຂຽວ;

3. ບັນດາບ້ານ ໃນເທດສະບານ, ກຸ່ມບ້ານ, ບ້ານໃຫຍ່, ຄອບຄົວ, ທຸລະກິດ, ບໍລິການ ແລະ ພົນລະເມືອງລວມທັງຊາວຕ່າງດ້າວ ຜູ້ທີ່ມາອາໄສຢູ່ຊົ່ວຄາວ ແລະ ຖາວອນ ພາຍໃນນະຄອນປາກເຊ ແລະ ບາງພື້ນທີ່ ຂອງເມືອງທີ່ມີຊາຍແດນຕິດຈອດ ຕ້ອງມີແຜນຟື້ນຟູ ແລະ ປົກປັກຮັກສາ ເທດສະບານນະຄອນປາກເຊ ສີຂຽວ;

4. ການສ້າງແຜນກໍານົດເຂດນໍາໃຊ້ທີ່ດິນ ແລະ ການພັດທະນາພື້ນຖານໂຄງລ່າງຕ່າງໆ ໃຫ້ຄໍານຶງເຖິງເງື່ອນໄຂຄວາມເປັນສີຂຽວ ຕາມອັດຕາສ່ວນທີ່ໄດ້ກໍານົດໄວ້ໃນມາດຕາ 9 ຂອງຂໍ້ຕົກລົງສະບັບນີ້.

## ໝວດທີ 4
## ການຄຸ້ມຄອງວຽກງານ ການພັດທະນາພື້ນທີ່ສີຂຽວ

**ມາດຕາ 11 ການຄຸ້ມຄອງວຽກງານ ການພັດທະນາພື້ນທີ່ສີຂຽວ**

ອົງການປົກຄອງນະຄອນປາກເຊ ເປັນເສນາທິການໃຫ້ແກ່ອົງການປົກຄອງແຂວງ ໃນການຄຸ້ມຄອງວຽກງານການພັດທະນາພື້ນທີ່ສີຂຽວ ໃນນະຄອນປາກເຊ ໂດຍເປັນໃຈກາງ ປະສານສົມທົບກັບພະແນກຊັບພະຍາກອນ

ທຳມະຊາດ ແລະ ສິ່ງແວດລ້ອມ, ພະແນກກະສິກຳ ແລະ ປ່າໄມ້, ພະແນກໂຍທາທິການ ແລະ ຂົນສົ່ງ, ຫ້ອງການຄຸ້ມຄອງ ແລະ ບໍລິການສາທາລະນະ, ອົງການປົກຄອງບ້ານ ແລະ ຂະແໜງການອື່ນທີ່ກ່ຽວຂ້ອງ.

**ມາດຕາ 12 ສິດ ແລະ ໜ້າທີ່ ຂອງອົງການປົກຄອງນະຄອນປາກເຊ**

ອົງການປົກຄອງນະຄອນປາກເຊ ມີສິດ ແລະ ໜ້າທີ່ ດັ່ງນີ້:

1. ຜັນຂະຫຍາຍ ແລະ ໂຄສະນາເຜີຍແຜ່ ໃນການຈັດຕັ້ງປະຕິບັດຂໍ້ຕົກລົງສະບັບນີ້ ໃຫ້ກວ້າງຂວາງ ແລະ ທົ່ວເຖິງ;

2. ປະສານສົມທົບກັບບັນດາກະຊວງ, ອົງການທຽບເທົ່າກະຊວງທີ່ກ່ຽວຂ້ອງ ໂດຍຜ່ານອົງການປົກຄອງແຂວງ ກ່ຽວກັບວຽກງານການພັດທະນາພື້ນທີ່ສີຂຽວ;

3. ຕິດຕາມ, ກວດກາ ແລະ ຊຸກຍູ້ຂະແໜງການສາຍຕັ້ງ ຂອງນະຄອນປາກເຊ ໃນການຈັດຕັ້ງປະຕິບັດຕາມແຕ່ລະໜ້າວຽກ ທີ່ຕົນຮັບຜິດຊອບ;

4. ຄວບຄຸມ ການຈັດຕັ້ງປະຕິບັດ ໂດຍປະສານສົມທົບກັບພະແນກການ, ອົງການທຽບເທົ່າພະແນກການອ້ອມຂ້າງນະຄອນປາກເຊ ແລະ ອົງການຈັດຕັ້ງຂັ້ນນະຄອນ ໃຫ້ມີຄວາມເປັນເອກະພາບ ໃນການຈັດຕັ້ງປະຕິບັດ;

5. ປຸກລະດົມ ແລະ ປຸກຈິດສຳນຶກ ຕໍ່ພະນັກງານ-ລັດຖະກອນ, ນັກຮຽນຮູ້ປັນຍາຊົນ ແລະ ປະຊາຊົນບັນດາເຜົ່າ ໃຫ້ເຂົ້າໃຈ ແລະ ໃຫ້ຄວາມຮ່ວມມື ໃນການຈັດຕັ້ງປະຕິບັດຂໍ້ຕົກລົງສະບັບນີ້;

6. ຄົ້ນຄວ້າ ແລະ ນຳສະເໜີ ບັນດາອົງການຈັດຕັ້ງທັງພາກລັດ ແລະ ເອກະຊົນ ຊ່ວຍສະໜັບສະໜູນ ຫຼື ສະໜອງງົບປະມານ ເຂົ້າໃນການຈັດຕັ້ງປະຕິບັດຂໍ້ຕົກລົງສະບັບນີ້;

7. ສະຫຼຸບລາຍງານ ແລະ ປະເມີນຜົນ ໃນການຈັດຕັ້ງປະຕິບັດຂໍ້ຕົກລົງສະບັບນີ້ ໃຫ້ຄະນະປະຈຳສະພາປະຊາຊົນແຂວງ ແລະ ອົງການປົກຄອງແຂວງ ຊາບເປັນແຕ່ລະໄລຍະ ປະຈຳ 6 ເດືອນຕົ້ນປີ ແລະ ປະຈຳປີ;

8. ປະຕິບັດສິດ ແລະ ໜ້າທີ່ອື່ນ ຕາມທີ່ໄດ້ກຳນົດໄວ້ໃນກົດໝາຍ ແລະ ລະບຽບການທີ່ກ່ຽວຂ້ອງ.

**ມາດຕາ 13 ສິດ ແລະ ໜ້າທີ່ ຂອງພະແນກຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມ**

ພະແນກຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມ ມີ ສິດ ແລະ ໜ້າທີ່ ດັ່ງນີ້:

1. ຜັນຂະຫຍາຍ, ໂຄສະນາເຜີຍແຜ່ ໃຫ້ທົ່ວສັງຄົມຮັບຮູ້ ກ່ຽວກັບວຽກງານດ້ານສິ່ງແວດລ້ອມ (ສ ສີຂຽວ);

2. ປະສານສົມທົບ ກັບຂະແໜງການທີ່ກ່ຽວຂ້ອງ ເພື່ອພັດທະນາພື້ນທີ່ສີຂຽວ ໃຫ້ເປັນຮູບປະທຳ ດ້ານສິ່ງແວດລ້ອມ;

3. ປະສານສົມທົບ ກັບອົງການປົກຄອງນະຄອນປາກເຊ ແລະ ບັນດາເມືອງທີ່ມີເຂດແດນຕິດຈອດ ເພື່ອນຳສະເໜີອົງການປົກຄອງແຂວງ ອອກໃບຢັ້ງຢືນຮັບຮອງ ແລະ ໃຫ້ການຍ້ອງຍໍຜູ້ດີເດັ່ນ ທີ່ໄດ້ປະກອບສ່ວນເຂົ້າໃນການຈັດຕັ້ງປະຕິບັດຂໍ້ຕົກລົງສະບັບນີ້;

4. ສະຫຼຸບລາຍງານ, ປະເມີນຜົນ ແລະ ຖອດຖອນບົດຮຽນ ກ່ຽວກັບການຈັດຕັ້ງປະຕິບັດເງື່ອນໄຂ ແລະ ຕົວຊີ້ວັດ ຕາມທີ່ໄດ້ກຳນົດໄວ້ໃນມາດຕາ 9 ຂອງຂໍ້ຕົກລົງສະບັບນີ້;

5. ປະຕິບັດ ສິດ ແລະ ໜ້າທີ່ອື່ນ ຕາມທີ່ໄດ້ກຳນົດໄວ້ໃນກົດໝາຍ ແລະ ລະບຽບການທີ່ກ່ຽວຂ້ອງ.

**ມາດຕາ 14 ສິດ ແລະ ໜ້າທີ່ ຂອງພະແນກກະສິກຳ ແລະ ປ່າໄມ້**

ພະແນກກະສິກຳ ແລະ ປ່າໄມ້ ມີ ສິດ ແລະ ໜ້າທີ່ ດັ່ງນີ້:

1. ສະໜອງເບ້ຍໄມ້ໃຫ້ແກ່ບຸກຄົນ, ນິຕິບຸກຄົນ ຫຼື ອົງການຈັດຕັ້ງ ໃນລາຄານະໂຍບາຍ;

2. ແນະນຳທາງດ້ານວິຊາການ ໃນການປູກຕົ້ນໄມ້ ແລະ ການບົວລະບັດຮັກສາ ໃຫ້ແກ່ບຸກຄົນ, ນິຕິບຸກຄົນ ຫຼື ອົງການຈັດຕັ້ງ;

3. ມີສ່ວນຮ່ວມທາງດ້ານວິຊາການ ໃນການຄຸ້ມຄອງປົກປັກຮັກສາຕົ້ນໄມ້ ທີ່ປູກເກົ່າ-ໃໝ່ ລວມທັງຕົ້ນໄມ້ທີ່ເກີດຂຶ້ນເອງຕາມທຳມະຊາດ;

4. ຂຶ້ນທະບຽນຕົ້ນໄມ້ປູກ, ຕົ້ນໄມ້ ທີ່ເກີດຂຶ້ນເອງຕາມທຳມະຊາດ ຫຼື ຕົ້ນໄມ້ດັ້ງເດີມ ໃຫ້ເປັນລະບົບ ແລະ ກາຍເປັນພື້ນທີ່ສີຂຽວ ຕາມເງື່ອນໄຂ ແລະ ຕົວຊີ້ວັດ;

5. ປະສານສົມທົບກັບຂະແໜງການທີ່ກ່ຽວຂ້ອງ ເພື່ອພັດທະນາພື້ນທີ່ສີຂຽວ ໃຫ້ເປັນຮູບປະທຳ ດ້ານສິ່ງແວດລ້ອມ;

6. ອະນຸຍາດການຕັດຕົ້ນໄມ້ ຕາມລະບຽບການ;

7. ປະຕິບັດສິດ ແລະ ໜ້າທີ່ອື່ນ ຕາມທີ່ໄດ້ກຳນົດໄວ້ໃນກົດໝາຍ ແລະ ລະບຽບການທີ່ກ່ຽວຂ້ອງ.

**ມາດຕາ 15 ສິດ ແລະ ໜ້າທີ່ ຂອງພະແນກໂຍທາທິການ ແລະ ຂົນສົ່ງ**

ພະແນກໂຍທາທິການ ແລະ ຂົນສົ່ງ ມີ ສິດ ແລະ ໜ້າທີ່ ດັ່ງນີ້:

1. ກຳນົດຂອບເຂດພື້ນທີ່ປູກຕົ້ນໄມ້ ຕາມແຄມເສັ້ນທາງ, ດອນກາງທາງສາຍເອກ, ສາຍຫຼັກ, ສາຍເຊື່ອມ ແລະ ສາຍແຈກ;

2. ສ້າງ ແລະ ກຳນົດແຜນຜັງສວນສາທາລະນະ, ກຳນົດແຜນຜັງການປູກຕົ້ນໄມ້ ເຂົ້າໃນແຜນຜັງທີ່ຈະກໍ່ສ້າງເສັ້ນທາງໃໝ່ ຫຼື ຂະຫຍາຍເສັ້ນທາງໃໝ່ ຊຶ່ງງົບປະມານໃນການປູກຕົ້ນໄມ້ແມ່ນໃຫ້ບັນຈຸເຂົ້າໃນມູນຄ່າລວມຂອງເສັ້ນທາງ;

3. ປະສານສົມທົບກັບຂະແໜງການທີ່ກ່ຽວຂ້ອງ ເພື່ອພັດທະນາພື້ນທີ່ສີຂຽວ ໃຫ້ເປັນຮູບປະທຳ ດ້ານສິ່ງແວດລ້ອມ ໂດຍສອດຄ່ອງກັບເຕັກນິກພື້ນຖານໂຄງລ່າງກ່ຽວຂ້ອງ;

4. ປະຕິບັດສິດ ແລະ ໜ້າທີ່ອື່ນ ຕາມທີ່ໄດ້ກຳນົດໄວ້ໃນກົດໝາຍ ແລະ ລະບຽບການທີ່ກ່ຽວຂ້ອງ.

**ມາດຕາ 16 ສິດ ແລະ ໜ້າທີ່ ຂອງຫ້ອງການຄຸ້ມຄອງ ແລະ ບໍລິການສາທາລະນະ**

ຫ້ອງການຄຸ້ມຄອງ ແລະ ບໍລິການສາທາລະນະ ມີ ສິດ ແລະ ໜ້າທີ່ ດັ່ງນີ້:

1. ຮັບຜິດຊອບປູກຕົ້ນໄມ້, ໄມ້ປະດັບ ແລະ ສວນຫຍ້າ ເພື່ອເພີ່ມພື້ນທີ່ສີຂຽວ ຢູ່ໃນນະຄອນປາກເຊ;

2. ຮັບຜິດຊອບໂດຍກົງ ໃນການຈັດຕັ້ງປະຕິບັດການຄຸ້ມຄອງ, ປົກປັກຮັກສາ, ການຕັດຮອນກິ່ງງ່າ, ຕົບແຕ່ງຕົ້ນໄມ້, ອະນາໄມ, ເກັບມ້ຽນຕົ້ນໄມ້, ງ່າໄມ້ຕາຍ ໃນເຂດຕົວເມືອງ ຂອງນະຄອນ;

3. ປະສານສົມທົບ ແລະ ອຳນວຍຄວາມສະດວກ ໃຫ້ຂະແໜງການທີ່ກ່ຽວຂ້ອງ ໃນການຕັດແຕ່ງຕົ້ນໄມ້, ປະດັບປະດາຕົ້ນໄມ້ ຕາມເສັ້ນທາງ, ສຳນັກງານ, ອົງການ, ຊຸມຊົນ, ບ້ານ ແລະ ຕາມສວນສາທາລະນະຕ່າງໆ;

4. ປະສານສົມທົບກັບພາກສ່ວນທີ່ກ່ຽວຂ້ອງ ເພື່ອສະເໜີຂຶ້ນທະບຽນຕົ້ນໄມ້ປູກ ໃນເຂດເທດສະບານ;

5. ສ້າງປ້າຍຊື່, ສັນຍາລັກ ຢູ່ພາຍໃນສວນສາທາລະນະ ແລະ ສະຖານທີ່ສາທາລະນະຕ່າງໆ ກ່ຽວກັບການຄຸ້ມຄອງປົກປັກຮັກສາ;

6. ປະຕິບັດ ສິດ ແລະ ໜ້າທີ່ອື່ນ ຕາມທີ່ໄດ້ກຳນົດໄວ້ໃນກົດໝາຍ ແລະ ລະບຽບການທີ່ກ່ຽວຂ້ອງ.

**ມາດຕາ 17 ສິດ ແລະ ໜ້າທີ່ ຂອງອົງການປົກຄອງບ້ານ**

ອົງການປົກຄອງບ້ານທີ່ກ່ຽວຂ້ອງ ມີ ສິດ ແລະ ໜ້າທີ່ ດັ່ງນີ້:

1. ເປັນເຈົ້າການ ໃນການຈັດຕັ້ງປະຕິບັດ ພັດທະນາພື້ນທີ່ສີຂຽວ ແລະ ຕິດຕາມ, ກວດກາ, ສະເໜີອົງການປົກຄອງນະຄອນ ແລະ ບັນດາເມືອງ ທີ່ມີຊາຍແດນຕິດຈອດ;

2. ລາຍງານ, ໃຫ້ຂໍ້ມູນ ກ່ຽວກັບການລະເມີດ, ທຳລາຍຕົ້ນໄມ້ ແລະ ພື້ນທີ່ສີຂຽວໃນຂອບເຂດບ້ານຕົນ;

3. ເປັນເຈົ້າການ ໃນການປົກປັກຮັກສາ, ບູລະນະພື້ນທີ່ສີຂຽວໃຫ້ຍືນຍົງ; ປັບປຸງ, ຟື້ນຟູ ການປູກຕົ້ນໄມ້ ໃຫ້ໄປຕາມທິດສີຂຽວ ແລະ ຍືນຍົງ;

4. ປຸກລະດົມ ປະຊາຊົນທີ່ອາໄສຢູ່ໃນບ້ານຕົນ ໃຫ້ເປັນເຈົ້າການເຂົ້າຮ່ວມປູກ ແລະ ຮັກສາຕົ້ນໄມ້ ໃນພື້ນທີ່ ຕາມທີ່ໄດ້ກຳນົດໄວ້ໃນຂໍ້ຕົກລົງສະບັບນີ້;

5. ປະຕິບັດ ສິດ ແລະ ໜ້າທີ່ອື່ນ ຕາມທີ່ໄດ້ກຳນົດໄວ້ໃນກົດໝາຍ ແລະ ລະບຽບການທີ່ກ່ຽວຂ້ອງ.

**ມາດຕາ 18 ສິດ ແລະ ໜ້າທີ່ ຂອງຂະແໜງການອື່ນ**

ຂະແໜງການອື່ນທີ່ກ່ຽວຂ້ອງ ມີ ສິດ ແລະ ໜ້າທີ່ ດັ່ງນີ້:

1. ພະແນກການ, ອົງການ, ກົມກອງ ທີ່ຕັ້ງຢູ່ນະຄອນປາກເຊ ແລະ ບັນດາເມືອງ ທີ່ມີຊາຍແດນຕິດຈອດກັບນະຄອນປາກເຊ ຕ້ອງເປັນເຈົ້າການ ໂຄສະນາເຜີຍແຜ່, ປູກຈິດສຳນຶກ ແລະ ປຸກລະດົມ ພະນັກງານຂອງຕົນ ໃຫ້ມີຄວາມຕື່ນຕົວ ແລະ ເປັນເຈົ້າການໃນການພັດທະນາພື້ນທີ່ສີຂຽວ ຢູ່ໃນຂອບເຂດຄວາມຮັບຜິດຊອບຂອງຕົນ ໃຫ້ໄປຕາມທິດສີຂຽວ ແລະ ຍືນຍົງ;

2. ອົງການຈັດຕັ້ງສາກົນ, ອົງການຈັດຕັ້ງສັງຄົມ, ສະຖາບັນການສຶກສາ, ວິສາຫະກິດ ທັງພາກລັດ ແລະ ເອກະຊົນ ທີ່ຕັ້ງຢູ່ນະຄອນປາກເຊ ແລະ ບາງພື້ນທີ່ຂອງເມືອງຕິດຈອດ ຕ້ອງເປັນເຈົ້າການ ແລະ ປະກອບສ່ວນເຂົ້າໃນປົກປັກຮັກສາ, ຟື້ນຟູ, ປູກຕົ້ນໄມ້-ພືດສີຂຽວ ໃຫ້ໄປຕາມທິດສີຂຽວ ແລະ ຍືນຍົງ;

3. ທຸກພາກສ່ວນ ຕາມທີ່ກຳນົດໄວ້ໃນມາດຕານີ້ ຕ້ອງປະສານສົມທົບກັບຂະແໜງການທີ່ກ່ຽວຂ້ອງ ເພື່ອພັດທະນາພື້ນທີ່ສີຂຽວ ໃຫ້ເປັນຮູບປະທຳ ດ້ານສິ່ງແວດລ້ອມ;

4. ປະຕິບັດ ສິດ ແລະ ໜ້າທີ່ອື່ນ ຕາມທີ່ໄດ້ກຳນົດໄວ້ໃນກົດໝາຍ ແລະ ລະບຽບການທີ່ກ່ຽວຂ້ອງ.

## ໝວດທີ 5
## ແຫຼ່ງທຶນ ແລະ ການນຳໃຊ້ແຫຼ່ງທຶນ

**ມາດຕາ 19 ແຫຼ່ງທຶນ**

ແຫຼ່ງທຶນຮັບໃຊ້ວຽກງານການພັດທະນາພື້ນທີ່ສີຂຽວໃນນະຄອນປາກເຊ ໄດ້ມາຈາກແຫຼ່ງຕ່າງໆ ດັ່ງນີ້:

1. ງົບປະມານຂອງລັດ;
2. ການປະກອບສ່ວນ ຂອງບຸກຄົນ, ນິຕິບຸກຄົນ ແລະ ອົງການຈັດຕັ້ງພາຍໃນ ແລະ ຕ່າງປະເທດ;
3. ກອງທຶນພັດທະນາຊັບພະຍາກອນປ່າໄມ້;
4. ກອງທຶນປົກປັກຮັກສາສິ່ງແວດລ້ອມ;
5. ການປັບໃໝ ຜູ້ທີ່ລະເມີດຕັດຕົ້ນໄມ້ ແລະ ທຳລາຍຕົ້ນໄມ້;
6. ລາຍຮັບອື່ນຕາມລະບຽບການ.

**ມາດຕາ 20 ການນຳໃຊ້ແຫຼ່ງທຶນ**

ການນຳໃຊ້ແຫຼ່ງທຶນ ທີ່ໄດ້ມາຈາກແຫຼ່ງຕ່າງໆ ຕາມທີ່ໄດ້ກຳນົດໄວ້ໃນມາດຕາ 19 ຂອງຂໍ້ຕົກລົງສະບັບນີ້ ແມ່ນຄວາມຮັບຜິດຊອບໂດຍກົງ ຂອງອົງການປົກຄອງນະຄອນປາກເຊ ເປັນຜູ້ແຕ່ງຕັ້ງຄະນະຮັບຜິດຊອບ ແລະ ກຳນົດລະບຽບການສະເພາະຕ່າງຫາກ.

## ໝວດທີ 6
## ການຕິດຕາມກວດກາ ແລະ ການແກ້ໄຂຂໍ້ຂັດແຍ່ງ

**ມາດຕາ 21 ການຕິດຕາມກວດກາພາຍໃນ**

ອົງການປົກຄອງນະຄອນປາກເຊ ເປັນຜູ້ຕິດຕາມ, ກວດກາ ແລະ ປະເມີນຜົນ ກ່ຽວກັບວຽກງານການພັດທະນາພື້ນທີ່ສີຂຽວ ໂດຍປະສານສົມທົບກັບພາກສ່ວນກ່ຽວຂ້ອງ ຕາມທີ່ໄດ້ກຳນົດໄວ້ໃນມາດຕາ 11 ຂອງຂໍ້ຕົກລົງສະບັບນີ້.

**ມາດຕາ 22 ການຕິດຕາມກວດກາພາຍນອກ**

ອົງການຕິດຕາມກວດກາພາຍນອກ ປະກອບມີ: ສະພາປະຊາຊົນແຂວງ, ອົງການກວດກາລັດແຂວງ, ອົງການໄອຍະການປະຊາຊົນແຂວງ ແລະ ອົງການກວດສອບປະຈຳພາກໃຕ້.

**ມາດຕາ 23 ການແກ້ໄຂຂໍ້ຂັດແຍ່ງ**

ໃນການຈັດຕັ້ງປະຕິບັດຂໍ້ຕົກລົງສະບັບນີ້ ຫາກມີຂໍ້ຂັດແຍ່ງເກີດຂຶ້ນ ອົງການປົກຄອງນະຄອນປາກເຊ ຕ້ອງເປັນເຈົ້າການ ໃນການປະສານສົມທົບກັບພາກສ່ວນກ່ຽວຂ້ອງ ຕາມທີ່ໄດ້ກຳນົດໄວ້ໃນມາດຕາ 11 ຂອງຂໍ້ຕົກລົງສະບັບນີ້ ເພື່ອພິຈາລະນາແກ້ໄຂ. ຖ້າຂໍ້ຂັດແຍ່ງດັ່ງກ່າວ ຫາກບໍ່ສາມາດແກ້ໄຂໄດ້ ແມ່ນໃຫ້ດຳເນີນຕາມຂັ້ນຕອນຂອງກົດໝາຍ.

## ໝວດທີ 7
## ຂໍ້ຫ້າມ, ນະໂຍບາຍຕໍ່ຜູ້ມີຜົນງານ ແລະ ມາດຕະການຕໍ່ຜູ້ລະເມີດ

**ມາດຕາ 24 ຂໍ້ຫ້າມ**

ຫ້າມບຸກຄົນ, ນິຕິບຸກຄົນ ແລະ ອົງການຈັດຕັ້ງ ມີພຶດຕິກຳ ດັ່ງນີ້:

1. ທຳລາຍຕົ້ນໄມ້ ໂດຍທາງກົງ ແລະ ທາງອ້ອມ ຫຼື ເຮັດໃຫ້ພື້ນທີ່ສີຂຽວຫຼຸດລົງ;
2. ຕັດ ຫຼື ເຄື່ອນຍ້າຍຕົ້ນໄມ້ ທີ່ໄດ້ຂຶ້ນທະບຽນ ໂດຍບໍ່ໄດ້ຮັບອະນຸຍາດ;
3. ປູກຕົ້ນໄມ້ໃສ່ພື້ນທີ່ ທີ່ມີຄວາມສ່ຽງ ຊຶ່ງອາດຈະສ້າງຄວາມເສຍຫາຍຕໍ່ຊຸມຊົນ ແລະ ຜູ້ທີ່ອາໄສຢູ່ເຂດໃກ້ຄຽງ;
4. ມີພຶດຕິກຳອື່ນ ທີ່ເປັນການລະເມີດ 6 ແຜນງານ ທີ່ໄດ້ກຳນົດໄວ້ໃນແຜນປະຕິບັດຍຸດທະສາດພັດທະນາຕົວເມືອງສີຂຽວ ແລະ ລະບຽບກົດໝາຍທີ່ກ່ຽວຂ້ອງ.

**ມາດຕາ 25 ນະໂຍບາຍຕໍ່ຜູ້ມີຜົນງານ**

ບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງ ທີ່ມີຜົນງານດີເດັ່ນ ໃນການຈັດຕັ້ງປະຕິບັດຂໍ້ຕົກລົງສະບັບນີ້ ຈະໄດ້ຮັບການຍ້ອງຍໍ ແລະ ນະໂຍບາຍຕາມກົດໝາຍ ແລະ ລະບຽບການທີ່ກ່ຽວຂ້ອງ.

**ມາດຕາ 26 ມາດຕະການຕໍ່ຜູ້ລະເມີດ**

ບຸກຄົນ, ນິຕິບຸກຄົນ ແລະ ອົງການຈັດຕັ້ງ ທີ່ລະເມີດຂໍ້ຕົກລົງສະບັບນີ້ ຈະຖືກກ່າວເຕືອນ, ສຶກສາອົບຮົມ, ປັບໃໝ, ໃຊ້ແທນຄ່າເສຍຫາຍທາງແພ່ງ ຫຼື ລົງໂທດທາງອາຍາ ຕາມແຕ່ລະກໍລະນີ ດັ່ງນີ້:

1. ກໍລະນີເປັນການລະເມີດຄັ້ງທຳອິດ ແລະ ມີລັກສະນະເບົາບາງ ທີ່ບໍ່ມີຄວາມເສຍຫາຍ ອົງການຄຸ້ມຄອງວຽກງານການພັດທະນາພື້ນທີ່ສີຂຽວ ຕ້ອງສຶກສາອົບຮົມ, ກ່າວເຕືອນ ພ້ອມທັງເຮັດບົດບັນທຶກໄວ້;

2. ກໍລະນີເກີດມີຄວາມເສຍຫາຍ ແຕ່ບໍ່ເປັນການກະທຳຜິດທາງອາຍາ:

- ຄັ້ງທີໜຶ່ງ: ສຶກສາອົບຮົມ, ກ່າວເຕືອນ, ລົງບົດບັນທຶກ ແລະ ໃຊ້ແທນຄ່າເສຍຫາຍທັງໝົດ ພ້ອມທັງປູກທົດແທນ;
- ຄັ້ງທີສອງ: ສຶກສາອົບຮົມ, ກ່າວເຕືອນ, ລົງບົດບັນທຶກ ແລະ ປັບໃໝ ຕາມທີ່ໄດ້ກຳນົດໄວ້ໃນກົດໝາຍທີ່ກ່ຽວຂ້ອງ.

3. ກໍລະນີ ເປັນການກະທຳຜິດທາງອາຍາ ຈະຖືກລົງໂທດ ຕາມທີ່ໄດ້ກຳນົດໄວ້ໃນກົດໝາຍທີ່ກ່ຽວຂ້ອງ.

## ໝວດທີ 8
## ບົດບັນຍັດສຸດທ້າຍ

### ມາດຕາ 27 ການຈັດຕັ້ງປະຕິບັດ

ມອບໃຫ້ອົງການປົກຄອງນະຄອນປາກເຊ ເປັນເຈົ້າການ ປະສານສົມທົບກັບ ພະແນກຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມ, ພະແນກກະສິກຳ ແລະ ປ່າໄມ້, ພະແນກໂຍທາທິການ ແລະ ຂົນສົ່ງ, ຫ້ອງການຄຸ້ມຄອງ ແລະ ບໍລິການສາທາລະນະ, ອົງການປົກຄອງບ້ານ ແລະ ຂະແໜງການອື່ນທີ່ກ່ຽວຂ້ອງ ເປັນຜູ້ຈັດຕັ້ງປະຕິບັດຂໍ້ຕົກລົງສະບັບນີ້ ໃຫ້ໄດ້ຮັບຜົນດີ.

### ມາດຕາ 28 ຜົນສັກສິດ

ຂໍ້ຕົກລົງສະບັບນີ້ ມີຜົນສັກສິດ ພາຍຫຼັງລົງລາຍເຊັນ ແລະ ລົງຈົດໝາຍເຫດທາງລັດຖະການ ສິບຫ້າວັນ.

ເຈົ້າແຂວງ

ແຂວງຈຳປາສັກ
ເຈົ້າແຂວງ

ປອ ວິໄລວົງ ບຸດດາຄຳ